ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ງານສະເຫຼີມສະຫຼອງ ວັນແມ່ຍິງສາກົນ ຄົບຮອບ 107 ປີ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ( 08 ມີນາ 1910 - 08 ມີນາ 2017 )




ໃນວັນຕອນເຊົ້າຂອງວັນເສົາ ວັນທີ **11 ມີນາ 2017** ເວລາ **08:00** ໂມງ, ທະນາຄານ ການຄ້າຕ່າງປະເທດ ລາວ ມະຫາຊົນ ພ້ອມດ້ວຍ 3 ອົງການຈັດຕັ້ງມະຫາຊົນ ໄດ້ສ້າງຂະບວນການແຂ່ງຂັນກິລາເພື່ອສະເຫຼີມສະຫຼອງ **ວັນແມ່ຍິງສາກົນ ຄົບຮອບ 107 ປີ ( 08 ມີນາ 1910 - 08 ມີນາ 2017 )** ທີ່ເດີ່ນກິລາ **ກູດໄລຟ໌ (Good Life)** ໂດຍການນຳພາຂອງ **ທ່ານ ພູຂົງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ ທຄຕລ ພ້ອມດ້ວຍຄະນະອຳນວຍການ ທຄຕລ ແລະ ອ້າຍເອື້ອຍນ້ອງພະນັກງານ ແມ່ຍິງ, ກຳມະບານ, ຊາວໜຸ່ມ ຈາກສຳນັກງານໃຫຍ່, ສາຂານະຄອນຫຼວງ ແລະ ສາຂາດົງໂດກ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ປະເພດຂອງການແຂ່ງຂັນກິລາປະກອບດ້ວຍ: ປະເພດການແຂ່ງຂັນກິລາບານເຕະ ເຊິ່ງເປັນການພົບ ກັນລະຫວ່າງ **ທີມການນຳຊາຍ ທຄຕລ** ພົບກັບ **ທີມລວມສະມາຊິກແມ່ຍິງ ທຄຕລ** ແລະ ການແຂ່ງຂັນກິລາມວນຊື່ນຄື: ກິລາຫິວລ້ານຊື່ນກັນ ແລະ ກິລາຕີກ່ອນຊາວບ້ານ.



**ຜົນການແຂ່ງຂັນກິລາບານເຕະ: ທີມລວມສະມາຊິກແມ່ຍິງ ທຄຕລ** ຊະນະ **ທີມການນຳຊາຍ 8 : 3 ປະຕູ**




**ລາງວັນທີ I ຂອງແຕ່ລະປະເພດ**




**ລາງວັນທີ II ຂອງແຕ່ລະປະເພດ**




**ລາງວັນທີ III ຂອງແຕ່ລະປະເພດ**

ຫຼັງຈາກການແຂ່ງຂັນກິລາສິ້ນສຸດລົງ, **ທ່ານ ພູຂົງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ມີຄຳເຫັນຕໍ່ກັບວັນດັ່ງກ່າວ ເພື່ອເປັນການສະແດງນ້ຳໃຈຍົກສູງພາລະບົດບາດຂອງແມ່ຍິງ ແລະ ໄດ້ມີການມອບກະຕ່າດອກໄມ້ຈາກ ຄະນະອຳນວຍການ ທຄຕລ ພ້ອມດ້ວຍ ຕາງໜ້າ 3 ອົງການຈັດຕັ້ງ ໃຫ້ກັບຕົວແທນ ສະຫະພັນແມ່ນຍິງ ທຄຕລ **ທ່ານນາງ ອັນລີ ສາຍສຸວັນ,** ພ້ອມນັ້ນ ກໍ່ໄດ້ມີພິທີມອບລາງວັນ ໃຫ້ແກ່ຜູ້ຊະນະການແຂ່ງຂັນປະເພດຕ່າງໆ ແລະ ໄດ້ຮ່ວມພາເຂົ້າສາມັກຄີກັນ.

ງານສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 107 ປີ ທຄຕລ ໄດ້ດຳເນີນໄປຢ່າງຟົດຟື້ນ, ທ່າມກາງບັນຍາກາດທີ່ມ່ວນຊື່ນ ແລະ ເປັນຂະບວນການເຕົ້າໂຮມຄວາມສາມັກຄີຂອງບັນດາພະນັກງານ ທຄຕລ ສະແດງເຖິງນ້ຳໃຈຍົກສູງພາລະບົດບາດຍິງ-ຊາຍ ໃຫ້ມີຄວາມເທົ່າທຽມກັນ, ພິທີການໄດ້ບັນລຸຈຸດປະສົງ ແລະ ໄດ້ສິ້ນສຸດລົງໃນເວລາ **14:00 ໂມງ** ຂອງວັນດັ່ງກ່າວ.











ວັນທີ 13 ມີນາ 2017, ພາບ ແລະ ຂຽນຂ່າວ: ທ້າວ ສຸລິຍົງ ສຸກຈັນດີ